# ປື້ມຄູ່ມື
# ວິທີການລ້ຽງໄກ່ລາດ
# ສຳລັບຊາວບ້ານ.



ໂດຍການຮ່ວມມື :

- ພະແນກ ກະສິກຳ ແລະ ປ່າໄມ້,
  ກຳແພງນະຄອນ.
- ອົງການຊີດເຊ.

## ສາລະບານ


| | | ໜ້າ |
|---|---|---|
| 1. | ລ້ຽງໄກ່ດີແນວໃດ? | 3 |
| 2. | ບັນຫາໄກ່ຕາຍຮ່າ ແລະ ວິທີແກ້ໄຂ | 4 |
| 2.1 | ການຄັດເລືອກສະຖານທີ່ ແລະ ການເຮັດຄອກ | 6 |
| 2.2 | ການຄັດເລືອກແນວພັນໄກ່ | 7 |
| 2.3 | ອາຫານ ແລະ ການໃຫ້ນ້ຳ | 8 |
| 2.4 | ອາຫານເສີມພື້ນບ້ານສຳລັບໄກ່ນ້ອຍ | 12 |
| 2.5 | ການສັກຢາປ້ອງກັນ | 14 |
| 2.6 | ການນຳໃຊ້ຢາພື້ນເມືອງ ເຂົ້າໃນການ ປ້ອງກັນພະຍາດໄກ່. | 16 |
| 2.7 | ຕາຕະລາງສັກຢາປ້ອງກັນສັດປີກ | 18 |
| 3. | ເອກກະສານອ້າງອີງ | 20 |

# ບົດນຳ

- ຢູ່ບ້ານເຮົາ ການລ້ຽງໄກ່ລາດ ແມ່ນມີການນິຍົມກັນລ້ຽງຢ່າງແຜ່ຫລາຍ ບໍ່ວ່າໃນຕົວເມືອງ ຫລືຊົນນະບົດ. ໄກ່ລາດລ້ຽງງ່າຍ, ຫາອາຫານກິນເອງໄດ້ ແລະ ມີຄວາມຕ້ານທານພະຍາດ ແລະ ດິນຟ້າອາກາດໄດ້ດີ. ໄກ່ລາດ ມີລົດແຊບ ສາມາດສະໜອງອາຫານໃຫ້ແກ່ຄອບຄົວ ແລະ ຂາຍໄດ້ທຸກເວລາ. ຊາວກະສິກອນຜູ້ໜຶ່ງ, ຖ້າຢາກປູກຝັງກໍ່ຕ້ອງລ້ຽງສັດໄປນຳ. ສັດທີ່ລ້ຽງງ່າຍກໍ່ແມ່ນໄກ່ລາດ, ຊຶ່ງນອກຈາກຈະໃຫ້ຊີ້ນ ແລະ ໄຂ່ເປັນອາຫານແລ້ວ ກໍ່ຍັງໃຫ້ຝຸ່ນ ເພື່ອໄປໃສ່ຕົ້ນໄມ້, ສວນຜັກ ແລະ ນາເຂົ້າໄດ້ອີກນຳ.
- ຖ້າເຮົາລ້ຽງໄກ່ຖືກຕ້ອງ ເຮົາກໍ່ຈະມີໄກ່ຫລາຍຂຶ້ນ ແລະ ສາມາດເປັນລາຍຮັບແກ່ຄອບຄົວເຮົາໄດ້.
- ໄກ່ລາດຕ້ອງການເຮົາເອົາໃຈໃສ່ເບິ່ງແຍງພຽງໜ້ອຍດຽວ ກໍ່ຈະມີໄກ່ເຕັມບ້ານ ເຕັມ ເມືອງ ໃຫ້ເຮົາໄດ້ກິນ ໄດ້ຂາຍກັນ. ລາຍຈ່າຍພຽງເລັກນ້ອຍ ແຕ່ມີຜົນຜະລິດເກີນຄາດ ກໍ່ເປັນສິ່ງທີ່ຊາວກະສິກອນຄວນລອງ.



*ໄກ່ຂອງທ່ານຈະແຂງແຮງເມື່ອໄດ້ກິນຢາພື້ນເມືອງ ແລະ ສັກຢາປ້ອງກັນເປັນປະຈຳ !!!*

2002

ອົງການຊິດເຊ

# ລ້ຽງໄກ່ລາດດີແນວໃດ ?



- ນຳໃຊ້ເປັນອາຫານ
- ທົນທານຕໍ່ພະຍາດ ແລະ ຫາກິນເກັ່ງ.
- ຂາຍໄດ້ທຸກຍາມ.
- ມີລາຍຮັບເພີ້ມ.
- ມີຝຸ່ນໃສ່ສວນ ແລະ ນາ.
- ນຳໃຊ້ເຂົ້າໃນຮີດຄອງປະເພນີ.

## ບັນຫາໄກ່ຕາຍຮ່າ ແລະ ວິທີແກ້ໄຂ

ເປັນຫຍັງລ້ຽງໄກ່ 3 - 4 ປີແລ້ວ ໄກ່ມັກຕາຍເລື້ອຍໆ ແລະ ສຸດ ທ້າຍກໍ່ຕາຍໝົດຄອກ?
ພວກທ່ານຈະແກ້ໄຂແນວໃດ ?




- ວິທີແກ້ໄຂ:

- ບໍ່ນຳເອົາໄກ່ທີ່ເປັນພະຍາດ ຫລືບໍ່ຮູ້ທີ່ມາຂອງພັນໄກ່ດັ່ງກ່າວ ເຂົ້າມາລ້ຽງ.
- ຝັງ ຫລືເຜົາໄກ່ຕາຍດ້ວຍພະຍາດຖິ້ມ.
- ຄັດໄກ່ເປັນພະຍາດອອກຈາກຝູງ ແລະ ທຳການປິ່ນປົວ.
- ນຳໃຊ້ຢາພື້ນເມືອງໃຫ້ໄກ່ກິນເປັນປະຈຳ.
- ຄອກໄກ່ທຸກໆປີ ຄວນທຳການຂ້າເຊື້ອ.
- ຄວນເລືອກສະຖານທີ່ໃຫ້ເໝາະສົມ.
- ຄັດເລືອກແນວພັນໄກ່ທີ່ດີໄວ້ສືບແນວ.
- ຊອກພັນໄກ່ທີ່ດີເຂົ້າມາລ້ຽງ.
- ມີອາຫານທີ່ດີ ແລະ ໃຫ້ນ້ຳທີ່ສະອາດໃຫ້ໄກ່ກິນ.
- ອະນາໄມຄອກໄກ່ເປັນປະຈຳ.
- ສັກຢາປ້ອງກັນພະຍາດໃຫ້ເປັນລະບົບ.

ຫ້າມເດັດຂາດບໍ່ໃຫ້ໄກ່ໃນສາຍເລືອດດຽວກັນປະສົມພັນກັນຄື:ພໍ່ກັບລູກຫຼື ລູກກັບແມ່, ເຊິ່ງເອີ້ນວ່າ: ເລືອດໄກ້ຄຽງ,ຈະເຮັດໃຫ້ໄກ່ອ່ອນແອ, ຕິດພະຍາດງ່າຍ ແລະ ສຸດທ້າຍກໍ່ຈະຕາຍໝົດຄອກ.

## 1. ການຄັດເລືອກສະຖານທີ່:



- ເປັນບ່ອນຫ່າງໄກຈາກຊຸມຊົນ.
- ເປັນບ່ອນລະບາຍນ້ຳໄດ້ດີ.
- ມີເດີ່ນຫຍ້າໃຫ້ໄກ່ໄດ້ຫາກິນ.
- ເປັນບ່ອນໂນນນ້ຳບໍ່ຖ້ວມ.
- ມີຕົ້ນໄມ້ບັງແດດໃນຕອນທ່ຽງ.
- ບໍ່ເຄີຍມີພະຍາດໄກ່ລະບາດ.

## 2. ການສ້າງຄອກໄກ່:

- ❖ ຄອກໄກ່ ຄວນມຸງດ້ວຍຫຍ້າ, ແອ້ມດ້ວຍໄມ້ເຮັຍ. ລະບາຍອາກາດດີ ແລະ ເຂົ້າໄປອະນາໄມງ່າຍ.
- ❖ ພື້ນຄອກຄວນປູດ້ວຍຂີ້ແກບທີ່ຕາກແດດຢ່າງໜ້ອຍ 3 - 4 ແດດ, ໜາປະມານເກືອບ 1 ຝາມື.
- ❖ ປ່ຽນຂີ້ແກບອອກ 2 ເດືອນຕໍ່ຄັ້ງ.

## 3. ການເລືອກພັນໄກ່:



- ພໍ່ແມ່ພັນຕ້ອງແຂງແຮງດີ, ໃຫ່ຍ, ຂົນເຫຼື້ອມໃສດີ, ບໍ່ຕອດລູກໂຕອື່ນ.
- ແມ່ພັນມີນ້ຳໜັກ 1,5 ກິໂລຂຶ້ນໄປ.
- ພໍ່ພັນມີນ້ຳໜັກ 2 ກິໂລຂຶ້ນໄປ.
- ແມ່ໄກ່ໃຫ້ໄຂ່ 12 ໜ່ວຍຂຶ້ນໄປ.
- ຟັກໄຂ່ແຕກຢ່າງໜ້ອຍ 10ໂຕ.
- ລ້ຽງລູກໄຫຍ່ຢ່າງໜ້ອຍ 8 ໂຕ.
- ຮ່າງກາຍສົມບູນ ແລະ ບໍ່ເຫງົາຊຶມ.
- ຄັດພໍ່ແມ່ພັນອອກ ເມື່ອນຳໃຊ້ໄດ້ 3 ປີ.
- ຄັດໄກ່ທີ່ບໍ່ຕ້ອງການໃຊ້ເປັນພໍ່ແມ່ພັນອອກ.

ຢ່າລືມ ... ພໍ່ພັນໄກ່ທີ່ດີປະສົມກັບແມ່ພັນໄກ່ທີ່ດີ ຈະໄດ້ລູກ ທີ່ດີ. ຈົ່ງເລີ້ມປະຕິບັດແຕ່ດຽວນີ້ໄປ ...ໄກ່ຂອງທ່ານຈະແຂງແຮງ, ທົນທານຕໍ່ພະຍາດ ແລະ ໃຫ້ຜົນຜະລິດສູງ.

# 4. ອາຫານໄກ່

4.1. ໄກ່ອາຍຸ 3- 21 ວັນ:



- ມີຮາງຫີນຊາຍເພື່ອຍ່ອຍອາຫານ.
- ໃຫ້ກິນເຂົ້າປຽນ, ຮຳອ່ອນສາລີບົດໃຫ້ມຸ່ນໆ.
-.ຖ້າມີທິວອາຫານແມ່ນຄວນໃຫ້  ກິນຕະຫຼອດພາຍໃນ 21 ວັນ.
- ອາຍຸໄກ່ 1 - 3 ວັນໃຫ້ກິນນ້ຳປະສົມວິຕາມິນ (vita - L ) ຖ້າມີ.

4.2 ໄກ່ອາຍຸ 1 - 3 ເດືອນ:



- ອາຫານ: ຜັກກາດ, ຜັກບົ້ງ, ປວກ, ແມງໄມ້, ຕັກແຕນໃບ ກະຖິນແຫ້ງ, ສາລີບົດ, ກະປູ, ເປືອກຫອຍບົດໃຫ້ມຸ່ນໆ ແລະ ອື່ນໆ.
- ຖ້າເກືອທິວອາຫານ ໃຫ້ຫລຸດ ທິວອາຫານລົງ ແລະ ເສີມເຂົ້າປຽນ, ຮຳອ່ອນ.

4.3 ໄກ່ອາຍຸ 4  ເດືອນຂຶ້ນໄປ:



- ເລີ່ມໃຫ້ກິນອາຫານເຊັ່ນ: ເຂົ້າເປືອກ, ມັນຕົ້ນ, ສາລີບົດ, ຫອຍບົດ, ໃບກະຖິນແຫ້ງ, ເກືອກິນເຄິ່ງບ່ວງແກງຕໍ່ອາຫານ1 ຄຸ. ນ້ຳສະກັດຊີວະພາບ1-2 ບ່ວງແກງ ປະສົມນ້ຳ 1 ລິດ ໃຫ້ກິນເປັນປະຈຳ.

ໄກ່ແຕ່ລະລຸ້ນ ມີຄວາມຕ້ອງການກິນອາຫານທີ່ມີທາດບຳລຸງລ້ຽງແຕກຕ່າງກັນ.
ສະນັ້ນ ທ່ານຄວນແຍກໄກ່ແຕ່ລະລຸ້ນໃຫ້ກິນອາຫານພໍໃຜພໍມັນ.

## ວິທີການໃຫ້ອາຫານ ແລະ ນ້ຳທີ່ຖືກຕ້ອງ ຄວນເຮັດແນວໃດ ?



ເວລາໃຫ້ອາຫານໄກ່ຄວນປູ ດ້ວຍເປົາປຸຍ ຫຼື ເຮັດດ້ວຍໄມ້ແປ້ນ ເພື່ອປ້ອງກັນບໍ່ໃຫ້ອາຫານຕິກດິນ ແລະ ຕິດເຊື້ອພະຍາດ.





ມີນ້ຳສະອາດໃຫ້ໄກ່ກິນປະຈຳ ແລະ ໃຫ້ປ່ຽນນ້ຳ 2 ຄັ້ງຕໍ່ມື້.



ມີຮາງຫີນແຮ່ ແລະ ຊາຍ, ໃຫ້ໄກ່ກິນ ເພື່ອຊ່ວຍຍ່ອຍອາຫານ.

ການໃຫ້ອາຫານທີ່ດີ, ຖືກຕ້ອງຈະຊ່ວຍ
ໃຫ້ຫຼຸດຜ່ອນການຕິດເຊື້ອພະຍາດໄດ້

## ອາຫານເສີມພື້ນບ້ານສຳລັບໄກ່ນ້ອຍ



- ກອງເຟືອງ, ໃບໄມ້, ໄມ້ໂດກຊະນິດຕ່າງໆໄວ້ຢູ່ບ່ອນຮົ່ມ.
- ເອົາສຸ່ມງວມໄວ້ ແລະ ຫົດນ້ຳທຸກໆມື້.
- 2-3ມື້ໃດກໍ່ເປີດສຸ່ມໃຫ້ໄກ່ນ້ອຍໄດ້ກິນປວກ ແລະ ແມງໄມ້ ແລະ ເປີດກົງໃຫມ່ທຸກໆມື້. ໄກ່ນ້ອຍຈະໄດ້ກິນປວກແລະ ໃຫຍ່ໄວ.



- ຂຸມເລິກປະມານ 30ຊັງຕີແມັດ. ເອົາເຟືອງ, ຂີ້ງົວ, ຂີ້ຄວາຍ, ໃບໄມ້ໃສ່. ເອົາ ສຸ່ມກວມ ແລະ ຫົດນ້ຳທຸກໆມື້. ພາຍຫຼັງໄດ້ 2- 3 ມື້ ກໍ່ເປີດໃຫ້ໄກ່ເຂັ່ຍກິນຫນອນ, ປວກ, ແມງໄມ້.



ຊອກໄມ້ທີ່ປວກມັກ ແລະ ຕັດເປັນທ່ອນນ້ອຍໆຢາຍຕາມ ແຄມຮົ້ວ, ໄກ່ຈະຊອກເຂັ່ຍກິນເອງ.

ປວກ, ຂີ້ກະເດືອນ, ຫນອນ, ແມງໄມ້, ຕັກແຕນ ສາມາດເປັນແຫຼ່ງອາຫານທີ່ດີ. ເມື່ອໄກ່ໄດ້ກິນ ທຸກໆມື້ ຈະໃຫຍ່ໄວຢ່າງແນ່ນອນ.

## ການປ້ອງກັນພະຍາດ



1. ໄກ່ນ້ອຍອາຍຸ 3 - 7 ວັນ ໃຫ້ ຢອດຢານິວຄາເຊີນອອ່ນຄີ: ຢອດໃສ່ດັງ 1 ຢອດ ແລະ ຕາ ເບື້ອງລະຢອດ.



2. ໄກ່ອາຍຸ 6 ອາທິດຂຶ້ນໄປ ໃຫ້ສັກວັກຊີນນິວຄາເຊີນແກ່, ສັກກ້າມເອິກໂຕລະ 0,5 ເຊເຊ ຄຸ້ມກັນໄດ້ 1 ປີ.



3. ໄກ່ອາຍຸ 6 ອາທິດຂຶ້ນໄປ ໃຫ້ສັກວັກຊີນອະຫິວາສັດປີກ, ສັກກ້ອງຫຼືບໜັງໂຕລະ 1 ເຊເຊ ຄຸ້ມກັນໄດ້ 3 ເດືອນ.



4. ອະນາໄມຄອກໄກ່ທີ່ປູດ້ວຍແກບ ເດືອນລະ 1 - 2 ຄັ້ງ

ການສັກຢາປ້ອງກັນ ແລະ ອະນາໄມຄອກໄກ່ເປັນປະຈຳ ເຮັດໃຫ້ໄກ່ຂອງທ່ານຫຼຸດຜ່ອນການຕາຍຮ່າຍ່າງແນ່ນອນ. ຖ້າບໍ່ມີເງື່ອນໄຂສັກຄືບ ໃຫ້ສັກນິວຄາເຊີນປີລະຄັ້ງກໍ່ໄດ້.

## ການນຳໃຊ້ຢາພື້ນເມືອງ ເຂົ້າໃນການປ້ອງກັນພະຍາດໄກ່



- ວິທີເຮັດ:

1. ຊອຍໃຫ້ມຸ່ນ: ເຄືອເຂົາຮໍ, ໃບກະເດົາ, ໃບຂີ້ເຫລັກ, ໃບກະຖິນ, ຜັກຂະ ( ຢ່າງລະເທົ່າກັນ ຫລືລຸດລົ່ນກັນເລັກໜ້ອຍກໍ່ໄດ້ 3 ກິໂລ ).




2. ສະໝຸນໄພ 3 ກິໂລ ປະສົມກາກນ້ຳຕານ ຫລືນ້ຳຕານ ຫລືນ້ຳອ້ອຍ 1 ກິໂລ ໃສ່ໄຫ ຫລືຖຸຢາງອັດໄວ້ໃນຖັງ 7 ວັນ ຈະໄດ້ນ້ຳທິວເຊື້ອ.

3. ປະສົມນ້ຳທິວເຊື້ອ 1 ລິດ + ກາກນ້ຳຕານ 1 ລິດ ຫລືນ້ຳຕານ, ນ້ຳອ້ອຍ 1 ກິໂລ ແລະ ນ້ຳ 10 ລິດໃສ່ຖັງປິດຝາໄວ້ 3 ມື້ ຈະໄດ້ນ້ຳສະກັດຊີວະພາບ.



4. ເອົານ້ຳສະກັດ 1 ບ່ວງແກງ ຕໍ່ນ້ຳ 1 ລິດ ໃຫ້ໄກ່ກິນ ຫລືປົນອາຫານທຸກໆມື້.
5. ສຳລັບໄກ່ນ້ອຍເກີດໃໝ່ ໃຫ້ຈຸ່ມດັງໄກ່ໃສ່ນ້ຳສະກັດຈະເຮັດໃຫ້ຕ້ານພະຍາດໄດ້ (ບໍ່ໃຫ້ຈຸ່ມດົນ ).

> ນ້ຳສະກັດຊີວະພາບສາມາດເຮັດໃຫ້ໄກ່ກິນອາຫານໄດ້ດີ, ແຂງແຮງ,ໃຫຍ່ໄວ ແລະ ປ້ອງກັນພະຍາດອະຫິວາໄດ້ອີກດ້ວຍ.

## ຕາຕະລາງການສັກຢາວັກຊີນສັດປີກ

| ວັກຊີນ | ໃຊ້ກັບສັດ | ອາຍຸສັດ ຢ່າງໜ້ອຍ | ວິທີນຳໃຊ້ | ໄລຍະຄຸ້ມກັນ |
|---|---|---|---|---|
| ນິວຄາ ເຊີນອ່ອນ | ໃຊ້ກັບໄກ່ ນ້ອຍ | ຢ່າງໜ້ອຍ 3-7 ມື້ ຂຶ້ນໄປ | ໃຊ້ຢອດດັງ,ຕາ ເບື້ອງລະຢອດ | 8 ອາທິດ |
| ຫລອດລົມ ອັກເສບ | ໃຊ້ກັບໄກ່ນ້ອຍ | ຢ່າງໜ້ອຍ 15 ມື້ ຂຶ້ນໄປ | ໃຊ້ຢອດດັງ,ຕາ ເບື້ອງລະຢອດ. | 1 ປີ |
| ໝາກສຸກ ສັດປີກ | ໃຊ້ກັບສັດປີກ ທົ່ວໄປ | ຢ່າງໜ້ອຍ 10 ມື້ ຂຶ້ນໄປ | ໃຊ້ແທງພື້ນປີກ ບາງ 2-3 ເທື່ອ. | 1 ປີ |
| ອະຫິວາ ເປັດ | ໃຊ້ກັບເປັດ ສະເພາະ | ຢ່າງໜ້ອຍ 3 ອາທິດຂຶ້ນໄປ | ສັກກ້າມຊີ້ນ ໄຕ ລະ 1 ເຊເຊ. | 6 ເດືອນ |
| ອະຫິວາສັດ ປີກ | ໃຊ້ກັບສັດປີກ ທົ່ວໄປ | ຢ່າງໜ້ອຍ 6 ອາທິດຂຶ້ນໄປ | ສັກຫລືບໜັງ ໄຕ ລະ 1 ເຊເຊ. | 3 ເດືອນ |
| ນິວຄາເຊີນ ແກ່ | ໃຊ້ກັບໄກ່ໃຫຍ່ ສະເພາະ | ຢ່າງໜ້ອຍ 6 ອາທິດຂຶ້ນໄປ | ສັກກ້າມ ໄຕລະ 0,5 ເຊເຊ | 1 ປີ |



ວັກຊີ ອະຫິວາັດປີກ
ໃຫ້ ກລີບທັ ງກ້ອງປີກຫລື
ຫລີບທັ ງຄໍກໍ່ໄດ້.

ວັກຊີນນິວຄາເຊີນແກ່
ໃຫ້ ສັກກ້າມເອິກ ໄຕລະ
1 ເຊເຊ.



ສັກຢາປ້ອງກັນຄຽງຄູ່ກັບນຳໃຊ້ຢາພື້ນເມືອງ
( ໜ້າທີ່ 16 ) ສາມາດປ້ອງກັນພະຍາດໄດ້.


❖ ພະແນກກະສິກຳ ແລະ ປ່າໄມ້ກຳແພງນະຄອນວຽງຈັນ
ກະຊວງກະສິກຳ ແລະ ປ່າໄມ້

ຊິດເຊ
CIDSE

ອົງການຮ່ວມມືສາກົນ
ເພື່ອການພັດທະນາ ແລະ ຄວາມສາມັກຄີ

## ເອກກະສານອ້າງອີງ:


1. ປື້ມຄູ່ມືວິທີການລ້ຽງໄກ່ລາດໃຫ້ໄດ້ຮັບຜົນດີສຳລັບຊາວບ້ານ ( ມັງກອນ 1997 ).

2. ປື້ມຄູ່ມືການນຳໃຊ້ຢາພື້ນເມືອງປິ່ນປົວສັດລ້ຽງ ໂດຍການຮ່ວມມື: ສະຖາບັນຕົ້ນໄມ້ເປັນຢາ, ພະແນກກະສິກຳ ແລະ ປ່າໄມ້ກຳແພງນະຄອນວຽງຈັນ ແລະ ອົງການຊີດເຊ, ວຽງຈັນ 2000.

3. ບົດຮຽນຈາກປະສົບການຕົວຈິງການລ້ຽງໄກ່ລາດ, ໂຄງການກະສິກຳຍືນຍົງ ບ້ານຊຳບອນ, ເມືອງໄຊທານີ, ກຳແພງນະຄອນວຽງຈັນ ( ປີ 1999 - 2001 ).

4. ປື້ມຄູ່ມືນ້ຳສະກັດຊີວະພາບເພື່ອການປູກຝັງ, ລ້ຽງສັດ ແລະ ສິ່ງແວດລ້ອມ ( ພຶດສະພາ 2001 ).

5. ບົດຮຽນກ່ຽວກັບການລ້ຽງໄກ່ລາດ, ໝູ, ກົບ, ການປ້ອງກັນ ແລະ ການຮັກສາສຸຂະພາບຂອງສັດລ້ຽງ ( ມັງກອນ 2000 ).


ຊີດເຊ

CIDSE

## ອົງການຊີດເຊ

ປື້ມຫົວນີ້ແມ່ນໄດ້ຮັບການສະໜັບສະໜູນທຶນຈາກອົງການຊີດເຊ, ຊຶ່ງເອີ້ນວ່າໂຄງການຂະໜາດນ້ອຍ. ອົງການຊີດເຊໄດ້ຮັບເງິນມາຈາກບັນດາປະເທດເອີລົບ, ນິວຊີແລນ ແລະ ການາດາ, ຊຶ່ງແມ່ນປະຊາຊົນຄົນທຳມະດາທີ່ຫາເຊົ້າກິນຄ່ຳ, ກຳມະກອນ, ຊາວນາ, ນັກຮຽນ ນັກສຶກສາ ແລະ ຜູ້ທີ່ມີນ້ຳໃຈຢາກຊ່ວຍເຫລືອ ແລະ ສະແດງຄວາມສາມະຄີກັບປະຊາຊົນລາວ, ເຂົາເຈົ້າໄດ້ທ້ອນໂຮມເງິນກັນຜູ້ລະເລັກລະນ້ອຍ ເພື່ອເປັນກ້ອນທຶນມາຊ່ວຍໂຄງການຢູ່ໃນປະເທດລາວ.

ຖ້າທ່ານຜູ້ໃດມີແນວຄິດສ້າງສັນ, ຊຶ່ງມີຫົວຄິດປະດິດສ້າງທີ່ແປກໃໝ່, ເຮັດໄປແລ້ວຮັບໃຊ້ສັງຄົມ ບໍ່ວ່າຈະເປັນດ້ານການທົດລອງ, ການຂຽນເອກກະສານ ແລະ ເຮັດກິດຈະກຳຂະໜາດນ້ອຍຕ່າງໆ, ຂໍເຊີນຕິດຕໍ່ພົວພັນເອົາລາຍລະອຽດຕ່າງໆ ທີ່ຫ້ອງການຂອງອົງການຊີດເຊ ທີ່ວຽງຈັນ, ບ້ານເລກທີ 19/3 ຖະໜົນເຈົ້າອານຸ


( ຂ້າງວັດຈັນ ) ກຳແພງນະຄອນວຽງຈັນ, ໂທ: 214862; ແຟກ: (856-21) 216312.